LALCO
LAO ASEAN LEASING PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ: 9100

ທີ່ ນະຄອນຫຼວງວຽງຈັນ, ວັນທີ: 24 ເມສາ 2024

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,

ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງເພີ່ມເຕີມກ່ຽວກັບວັນປິດປຶ້ມບັນຊີຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນ ແລະ ວັນຈັດກອງປະຊຸມຜູ້ຖືຮຸ້ນວິສາມັນປະຈຳປີ 2024.

- ອີງຕາມ ໜັງສືແຈ້ງການຈາກ ຕລຊລ, ສະບັບເລກທີ 485/ຕລຊລ, ລົງວັນທີ 23 ເມສາ 2024;
- ອີງຕາມ ມະຕິກອງປະຊຸມຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ເລກທີ 9096 ລົງວັນທີ 11 ເມສາ 2024;
- ອີງຕາມ ມະຕິກອງປະຊຸມ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ເລກທີ 9097, ລົງວັນທີ 11 ເມສາ 2024.

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ລອຊ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ບໍລິສັດໄດ້ກຳນົດເອົາ ວັນທີ 3 ພຶດສະພາ 2024 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນ (Record Date) ເພື່ອກຳນົດສິດຂອງຜູ້ຖືຮຸ້ນຂອງ ບໍລິສັດ ລອຊ ໃນການເຂົ້າຮ່ວມກອງປະຊຸມວິສາມັນປະຈຳປີ 2024 ແລະ ສິດໄດ້ຮັບເງິນປັນຜົນຂອງ ບໍລິສັດ ລອຊ ຈາກຜົນການດຳເນີນທຸລະກິດ ໃນໄລຍະຜ່ານມາ ຮອດທ້າຍ 31 ທັນວາ 2022 ຈຳນວນ 318,384,000,000 ກີບ, ເງິນປັນຜົນຕໍ່ຮຸ້ນ 1,056 ກີບ ການິດຈ່າຍໃນວັນທີ 24 ມິຖຸນາ 2024.

ພ້ອມນັ້ນ, ບໍລິສັດ ລອຊ ຂໍຊີ້ແຈ້ງກ່ຽວກັບສາເຫດຂອງການປ່ຽນວັນປິດປຶ້ມບັນຊີຜູ້ຖືຮຸ້ນ ທີ່ໄດ້ເປີດເຜີຍໃນວັນທີ 11 ເມສາ 2024 ຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊລ, ຊຶ່ງບໍລິສັດໄດ້ປ່ຽນແປງວັນປິດປຶ້ມບັນຊີຜູ້ຖືຮຸ້ນຈາກວັນທີ 18 ເມສາ 2024 ມາເປັນ ວັນທີ 3 ພຶດສະພາ 2024 (ເນື່ອງຈາກວ່າວັນດັ່ງກ່າວ ແມ່ນກົງກັບວັນພັກລັດຖະການ ຫຼື ວັນປິດການຊື້ ຂາຍຂອງ ຕລຊລ). ສະນັ້ນ, ບໍລິສັດ ມີຄວາມຈຳເປັນຂໍເລື່ອນວັນປິດປຶ້ມດັ່ງກ່າວ ແລະ ວັນຈັດກອງປະຊຸມຜູ້ຖືຮຸ້ນວິສາມັນອອກໄປ (ເຊິ່ງກອງປະຊຸມຜູ້ຖືຮຸ້ນວິສາມັນຈະຈັດຂຶ້ນໃນວັນທີ 13 ມິຖຸນາ 2024) ເພື່ອໃຫ້ສອດຄ່ອງກັບລະບຽບຂອງຕະຫຼາດຫຼັກຊັບລາວວ່າງອອກ.

ສະນັ້ນ, ຈຶ່ງຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບ.

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ທ່ານ Yoshihito Oshima

ສແກນດ້ວຍ CamScanner